Media Release

Cambodia • Lao PDR • Thailand • Viet Nam
For sustainable development

MEKONG RIVER COMMISSION MRC FOR SUSTAINABLE DEVELOPMENT

ສາມາດອອກຂ່າວໄດ້ທັນທີ

# ປະເທດເຢຍລະມັນ ເພີ່ມທຶນຕື່ມ ຈຳນວນ 1,45 ລ້ານຢູໂຣ ໃຫ້ແກ່ ຄະນະກຳມາທິການແມ່ນ້ຳຂອງສາກົນ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 18 ພະຈິກ 2021** — ປະເທດເຢຍລະມັນ ກຳລັງຈັດສັນທຶນເພີ່ມຕື່ມ ຈຳນວນ 1,45 ລ້ານຢູໂຣ ໃຫ້ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ເພື່ອແກ້ໄຂບັນຫາທ້າທາຍດ້ານການພັດທະນາ ແລະ ດ້ານການຄຸ້ມຄອງ ໃນເຂດອ່າງແມ່ນ້ຳຂອງຕອນລຸ່ມ. ທຶນເພີ້ມຕື່ມນີ້ ຈະສະໜັບສະໜູນການຮ່ວມມືດ້ານວິຊາການ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດຂອງ ຄມສ ສຳລັບປີ 2021-2025 ແລະ ເປັນການປະກອບສ່ວນເພີ້ມຕື່ມ ຈາກ 3 ລ້ານຢູໂຣ ທີ່ປະເທດເຢຍລະມັນ ໄດ້ປະກອບສ່ວນໄປກ່ອນໜ້ານີ້ແລ້ວ ດັ່ງ ທີ່ໄດ້ປະກາດໃນເດືອນມິຖຸນາ 2021.

ທ່ານ ດຣ. ຄຣິສຕີນາ ຊີເບີກ-ເອວເວີເຟວ (Christina Seeberg-Elverfeldt) ຫົວໜ້າຝ່າຍການຮ່ວມມືດ້ານການພັດທະນາ ຂອງສະຖານທູດເຢຍລະມັນ ປະຈຳ ສປປ ລາວ ໄດ້ກ່າວໃນພິທີ ທີ່ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນວັນທີ 18 ພະຈິກນີ້ວ່າ ທຶນເພີ້ມຕື່ມດັ່ງກ່າວນີ້ ຈະສົ່ງເສີມຄວາມສາມາດຂອງ ຄມສ ໃນການແກ້ໄຂ ຄວາມສ່ຽງດ້ານສະພາບອາກາດ.

“ທຶນເພີ່ມຕື່ມນີ້ ຈະຊ່ວຍ ຄມສ ສ້າງຕັ້ງຕາໜ່າງຕິດຕາມແມ່ນ້ຳຫຼັກ ຂອງຕົນ ໃນພາກພື້ນແມ່ນ້ຳຂອງ ເຊິ່ງເປັນບາດກ້າວສຳຄັນ ໃນການກ້າວໄປສູ່ການໄດ້ຮັບຂໍ້ມູນແລະຂ່າວສານ ທີ່ຖ່ວງທັນເວລາຫຼາຍຂຶ້ນ ກ່ຽວກັບ ຜົນກະທົບຂອງ ບັນດາໂຄງການໂຄງລ່າງພື້ນຖານທາງນ້ຳ ຢູ່ແມ່ນ້ຳຂອງ ແລະ ແມ່ນ້ຳສາຂາ. ພວກເຮົາຫວັງວ່າ ທຶນດັ່ງກ່າວນີ້ ຈະປະກອບສ່ວນ ໃນການໃຫ້ຂໍ້ມູນເພື່ອຕັດສິນໃຈ ກ່ຽວກັບ ການພັດທະນາ ແລະ ການຄຸ້ມຄອງຊັບພະຍາກອນນ້ຳຢ່າງມີຄວາມຮັບຜິດຊອບ ພ້ອມທັງ ສົ່ງເສີມຄວາມສາມາດຂອງ ຄມສ ໃນການຄຸ້ມຄອງ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໃຫ້ມີປະສິດທິພາບຫຼາຍຂຶ້ນ”.

ທ່ານ ດຣ. ອັນ ພິສ ຮັດດາ, ຫົວໜ້າກອງເລຂາ ຄມສ ໄດ້ກ່າວວ່າ ທຶນດັ່ງກ່າວນີ້ ສະແດງອອກໃຫ້ເຫັນເຖິງ ຄວາມມຸ້ງໝັ້ນຂອງປະເທດເຢຍລະມັນ ຕໍ່ກັບການຮ່ວມມືໃນອະນາຄົດ ສຳລັບ ການພັດທະນາຢ່າງມີຄວາມຮັບຜິດຊອບ ແລະ ການຄຸ້ມຄອງທີ່ດີ ໃນອ່າງແມ່ນ້ຳຂອງ.

“ພວກເຮົາຂໍຂອບໃຈ ລັດຖະບານເຢຍລະມັນ ທີ່ໄດ້ຕັດສິນໃຈ ສະໜອງທຶນເພີ່ມຕື່ມນີ້ ໃຫ້ ຄມສ ເຊິ່ງມັນຈະຖືກນຳໃຊ້ ເພື່ອປັບປຸງຄວາມສາມາດຂອງພວກເຮົາ ໃນການເກັບກຳຂໍ້ມູນ ແລະ ປົກປ້ອງອະນາຄົດ ຂອງປະຊາຊົນຫຼາຍຄົນທີ່ເພິ່ງພາອາໃສ ອ່າງແມ່ນ້ຳຂອງຕອນລຸ່ມແຫ່ງນີ້ ສຳລັບ ການຫາລ້ຽງຊີວິດຂອງພວກເຂົາ ໃຫ້ມີປະສິດທິພາບຫຼາຍຂຶ້ນ”.

ທຶນເພີ່ມຕື່ມນີ້ ຈະສະໜັບສະໜູນ ໂຄງການຮ່ວມມືກ່ຽວກັບ ນ້ຳຂ້າມຊາຍແດນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ມັນຈະເນັ້ນໜັກໃສ່ ການສ້າງຄວາມສາມາດໃຫ້ ຕາໜ່າງຕິດຕາມແມ່ນ້ຳຫຼັກ ຂອງ ຄມສ ເຊິ່ງເປັນໂຄງການຮ່ວມກັນ

ເພື່ອປັບປຸງ ຄວາມສາມາດໃນການປັບຕົວ ເຂົ້າກັບສະພາບອາກາດ ໃນອ່າງຮັບນ້ຳຍ່ອຍ 9C-9T ໃນທະເລສາບ ໂຕນເລສາບ ແລະ ການພັດທະນາອົງກອນ.

ປະເທດເບຍລະມັນ ໄດ້ຮ່ວມວຽກງານຢ່າງໃກ້ສິດກັບ ຄມສ ແລະ ໄດ້ບັນລຸຜົນໄດ້ຮັບທີ່ງອກງາມ ຈາກ ແຜນງານ ການຕິດຕາມດ້ານສິ່ງແວດລ້ອມຮ່ວມກັນ ຢູ່ເຂື່ອນໄຊຍະບູລີ ແລະ ເຂື່ອນດອນສະໂຮງ. ຜົນໄດ້ຮັບເບື້ອງຕົ້ນ ຈາກ ສອງໂຄງການທົດລອງນີ້ (ເຊິ່ງຈະໄດ້ຈັດພິມເຜີຍແຜ່ ພາຍໃນປີນີ້) ຢັ້ງຢືນເຖິງ ຄວາມສໍາຄັນຂອງ ການເກັບກໍາ ຂໍ້ມູນ ທີ່ເຊື່ອຖືໄດ້ ແລະ ຂໍ້ມູນທີ່ກ່ຽວຂ້ອງ ເພື່ອປະກອບໃຫ້ການຕັດສິນໃຈກ່ຽວກັບ ການພັດທະນາ ແລະ ການຄຸ້ມຄອງ ຊັບພະຍາກອນນ້ຳ.

ປະເທດເບຍລະມັນ ມີສາຍພົວພັນການຮ່ວມມື ທີ່ດົນນານ ກັບ ຄມສ ນັບຕັ້ງແຕ່ການສ້າງຕັ້ງ ຄມສ ໃນປີ 1995. ໃນເວລາຫຼາຍປີຜ່ານມາ ປະເທດເບຍລະມັນ ໄດ້ສະໜອງທຶນຫຼາຍກວ່າ 50 ລ້ານຢູໂຣ ໃນການສະໜັບສະໜູນ ດ້ານ ວິຊາການ ແລະ ດ້ານການເງິນ ເພື່ອຈັດຕັ້ງປະຕິບັດ ວິໄສທັດຂອງ ຄມສ ຄື: “ອ່າງແມ່ນ້ຳຂອງທີ່ ໝັ້ນຄົງທາງ ເສດຖະກິດ, ຍຸດຕິທໍາໃນສັງຄົມ, ເປັນມິດກັບສິ່ງແວດລ້ອມ ແລະ ສາມາດປັບຕົວເຂົ້າກັບສະພາບອາກາດ”.

**ຂໍ້ມູນສໍາລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງ ແມ່ນ້ຳຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກໍາປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**-ຈົບ-**

**ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:**
ທ່ານ ໂສພຽກ ແມ, ພະນັກງານປະຊາສໍາພັນ
ກອງເລຂາ ຄະນະກໍາມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື: +856-20-77779168

###